**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມນ້ຳປະປາ
ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ
ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ

ເລກທີ 914 /ຄຂນສອ
ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2025

## ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ເຖິງ: ບັນດາ ບໍລິສັດ/ຫ້າງຮ້ານ ທີ່ສົນໃຈ

**ເລື່ອງ: ເຊີນເຂົ້າຮ່ວມການປະມູນສົມທຽບລາຄາ ການສະໜອງ ແລະ ຕິດຕັ້ງ ແອເຢັນ ສໍາລັບນໍາໃຊ້ໃນວຽກງານບໍລິຫານ ຂອງໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ.**

1. ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ ແມ່ນໂຄງການໜຶ່ງ ທີ່ຈັດຕັ້ງປະຕິບັດໂດຍ ກົມນ້ຳປະປາ ກະຊວງໂຍທາທິການ ແລະ ຂົນສົ່ງ, ເຊິ່ງໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ ເພື່ອດໍາເນີນການປະມູນຈັດຊື້ ແອເຢັນ ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ ຂໍເຊີນບໍລິສັດ/ຮ້ານ ຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສໍາລັບການສະໜອງ ແລະ ຕິດຕັ້ງ ແອເຢັນ, ໄລຍະເວລາສົ່ງມອບ ຫຼື ການບໍລິການແມ່ນ 30 ວັນ ພາຍຫຼັງເຊັນສັນຍາ.
3. ການປະມູນນີ້ຈະດໍາເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນສົມທຽບລາຄາ ຈະຕ້ອງສົ່ງກ່ອນ ເວລາ 13:30 ໂມງ, ຂອງວັນທີ 09 ມັງກອນ 2026, ທີ່ຫ້ອງປະຊຸມຊັ້ນ 04 ຂອງໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ (ຖະໜົນດົງປ່າລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ) ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 13:30 ໂມງ, ຂອງວັນທີ 09 ມັງກອນ 2026, ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.
5. ຜູ້ເຂົ້າຮ່ວມແຂ່ງຂັນປະມູນສົມທຽບລາຄາ ສາມາດສອບຖາມຂໍ້ມູນເພີ່ມເຕີມ ໂທ 021 451826, ອີເມວ: swsshp.procurement@gmail.com.

**ຫົວໜ້າໂຄງການ**

ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ

ຈັນເທພາ ຂັດຕິຍະວົງ